**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ.026./ສອສ.ອທອ

ວັນທີ 9/2/2022

# ບົດບັນທຶກ

ກອງປະຊຸມ ປຶກສາຫາລື ກ່ຽວກັບ ການປັບປຸງ ນະໂຍບາຍ ວົງເງິນການປ່ອຍກູ້.

**1. ການຈັດຕັ້ງ:**

- ສະຖານທີ່: ຫ້ອງປະຊຸມ ສອສ ຊັ້ນ 5 ຕຶກ ອທອ ສູນກາງ
- ເວລາ: 15:00 – 15:30 , ວັນທີ 09 ກຸມພາ 2022
- ຜູ້ເຂົ້າຮ່ວມ: ຄະນະອໍານວຍການ ສອສ ໂດຍ ທ່ານ ໄຊສົມໝາຍ ສີສໍາພັນໄຊ ເປັນປະທານກອງປະຊຸມ.

**2. ຈຸດປະສົງຂອງກອງປະຊຸມ:**

- ປຶກສາຫາລືກ່ຽວກັບ ການຄົ້ນຄວ້າປັບປຸງ ນະໂຍບາຍ ວົງເງິນການປ່ອຍກູ້.

3. **ມະຕິຂອງກອງປະຊຸມ:**

**ກອງປະຊຸມໄດ້ມີມະຕິເຫັນດີເປັນເອກະພາບຮັບຮອງເອົາດັ່ງລຸ່ມນີ້:**

1. ເຫັນດີກໍານົດວົງເງິນການກູ້ຢືມ ແລະ ໄລຍະເວລາການຊໍາລະ ດັ່ງລຸ່ມນີ້:
   - ປະເພດການກູ້ເງິນສຸກເສີນ : ວົງເງິນກູ້ສູງສຸດ ⩽ 15 ລ້ານກີບ ຊໍາລະພາຍໃນ 2 ເດືອນ
   - ປະເພດການກູ້ເງິນປົກກະຕິ : ວົງເງິນກູ້ສູງສຸດ ⩽ 100 ລ້ານກີບ ຊໍາລະພາຍໃນ 3 ປີ
   - ປະເພດການກູ້ແບບພິເສດ : ວົງເງິນກູ້ສູງສຸດ ⩽ 300 ລ້ານກີບ ຊໍາລະພາຍໃນ 3 ປີ
2. ນໍາໃຊ້ເງິນເດືອນເປັນຫຼັກຊັບຄໍ້າປະກັນ ສໍາລັບ ປະເພດການກູ້ເງິນແບບສຸກເສີນ ແລະ ປະເພດການກູ້ເງິນແບບປົກກະຕິ.
3. ນໍາໃຊ້ຫຼັກຊັບຄໍ້າປະກັນ: ປະເພດທີ່ດິນ, ທະບຽນລົດ (ປະເພດລົດໃຫຍ່) ສໍາລັບປະເພດການກູ້ເງິນແບບພິເສດ.
4. ໄລຍະເວລາສົ່ງຕົ້ນທຶນ ແລະ ດອກເບ້ຍ ສູງສຸດ 36 ເດືອນ (3 ປີ)
5. ຄິດໄລ່ອັດຕາດອກເບ້ຍ ແລະ ປະເພດການກູ້ເງິນຕາມຕາຕະລາງດັ່ງລຸ່ມນີ້:

| ລ/ດ | ປະເພດການກູ້ຢືມ ແລະ ໄລຍະການຊໍາລະ | ອັດຕາດອກເບ້ຍ |
|---|---|---|
| 1 | ການກູ້ຢືມແບບພິເສດ ພາຍໃນ 12 ເດືອນ | 1.7% |
| 2 | ການກູ້ຢືມແບບພິເສດ ພາຍໃນ 24-36 ເດືອນ | 1.8% |
| 3 | ການກູ້ຢືມແບບພິເສດ ພາຍໃນ 36 ເດືອນ | 2% |
| 4 | ການກູ້ແບບປົກກະຕິ | 1.56% |
| 5 | ການກູ້ແບບສຸກເສີນ | 1 % |

6. ເຫັນດີໃຫ້ອອກແຈ້ງການໃຫ້ບັນດາສະມາຊິກໄດ້ຮັບຊາບ.

ອຳນວຍການ ສອສ

1. ທ່ານ ໄຊສົມໝາຍ ສໍສຳພັນໄຊ..................................

2. ທ່ານ ນາງ ມະນີຄຳ ພົມມະສານ..................................

3. ທ່ານ ນາງ ສີສຸພັນ ແກ້ວມະນີວົງ..................................

4. ທ່ານ ພຸດໄລ ວົງໄຊ..................................................

5. ທ່ານ ນາງ ຈັນພອນ ພາລະໂກສົນ..................................